ສານປະຊາຊົນ
ແຂວງຫຼວງພະບາງ
ຮັບເຂົ້າ | ເລກທີ ...009... ວັນທີ ...11.1.2016...

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------=====0000=====-----------

ແຂວງ...ຫຼວງພະບາງ.........

ເມືອງ...ຫຼວງພະບາງ.........

ບ້ານ......ຊຽງທອງ..................

# ໃບຄຳຮ້ອງຂໍ

## ຮຽນ: ທ່ານປະທານສານປະຊາຊົນ ແຂວງ ຫຼວງພະບາງ.

ເລື້ອງ: ຄຳຮ້ອງຂໍໃຫ້ອອກມາດຕະການ ☑ ກວດກາ ☐ ອາຍັດ. ເພື່ອຮັບປະກັນການຮ້ອງຟ້ອງ.

ອີງຕາມມາດຕາ 121 (ປັບປຸງ) ແລະ ມາດຕາ 128 (ໃໝ່) ຂອງກົດໝາຍວ່າດ້ວຍການດຳເນີນຄະດີ ແພ່ງ ສະບັບປັບປຸງປີ 2012.

ຂ້າພະເຈົ້າທ້າວ/ນາງ....ເພັດສະໝອນ ຊຸມດາລາ....ອາຍຸ..52..ປີ ສັນຊາດ....ລາວ....,ອາຊີບ........ທຸລະກິດ...ປັດຈຸບັນຢູ່ບ້ານ.......ຊຽງທອງ..................ໜ່ວຍ....2....ເຮືອນເລກທີ..22.....ເມືອງ.....ຫຼວງພະບາງ....................ແຂວງ......ຫຼວງພະບາງ.................(ໂຈດ/ຈຳເລີຍ).

ສະຫຼຸບເຫດການໂດຍຫຍໍ້ຂອງຄະດີ:......ຂ້າພະເຈົ້າ ທ້າວ ເພັດສະໝອນ ຊຸມດາລາ ອາຍຸ 52 ປີ ສັນຊາດລາວ ແລະ ຄູ່ສົມລົດ ທ້າວ ແສງອາລຸດ ຢາງອູ້ໄລ ອາຍຸ ປີ ສັນຊາດ ລາວ ປະຈຸບັນຢູ່ບ້ານ ຊຽງແກ້ວ ເມືອງ ຫຼວງພະບາງ ແຂວງ ຫຼວງພະບາງ ໄດ້ຊື້ ທີ່ດິນ ນຳ ນາງ ບຸນທັນ ຕອນທີ 1 ມີເນື້ອທີ່ 263 ຕາແມັດ ແຜນທີ່ໃບຕາດິນ ເລກທີ C-196-198/03 ເລກທີ 116 ອອກ ຊື່ ນາງ ບຸນທັນ, ທີ່ດິນ ຕອນທີ 2 ມີເນື້ອທີ່ 1 ເຮັກຕາ 5.868 ຕາແມັດ ແຜນທີ່ໃບຕາດິນ ເລກທີ C-196-198/04 ເລກທີ 123 ອອກ ຊື່ ນາງ ບຸນທັນ ພາຍຫຼັງທີ່ຈ່າຍເງິນ ສຳເລັດແລ້ວ ພວກຂ້າພະເຈົ້າ ໄດ້ສະເໜີ ໃຫ້ເຈົ້າໜ້າທີ່ທີ່ດິນ ຂອງ ໄປວັດແທກ ເຂດ ຫຼັກໝາຍ ໃໝ່ ຈາກນັ້ນຈຶ່ງຮູ້ວ່າ ເນື້ອທີ່ດິນ ຕອນທີ 2 ແມ່ນບໍ່ຄົບຕາມ ເນື້ອທີ່ ໃນໃບຕາດິນ ເນື້ອທີ່ດິນ ຕົວຈິງ ມີພຽງແຕ່ 5.868 ຕາແມັດ ເຊິ່ງທີ່ດິນ ບໍ່ພໍ ເກືອບ 10.000 ຕາແມັດ ຈາກນັ້ນ ຕົນ ຈຶ່ງໄດ້ ໄປ ໄກ່ເກ່ຍ ນຳ ນາງ ບຸນທັນ ເພື່ອຈະຂໍເງິນຄືນ ຕາມເນື້ອທີ່ທີ່ຂາດ ຫາຍໄປນັ້ນ ແຕ່ຜູ້ກ່ຽວ ປະຕິເສດ ບໍ່ຍອມສົ່ງຄືນ. ສະນັ້ນ ຂ້າພະເຈົ້າ ຈຶ່ງໄດ້ຮ້ອງຟ້ອງ ນາງ ບຸນທັນ ມາຍັງສານ.

ແຂວງ ຫຼວງ ພະບາງ ເພື່ອທວງ ເອົາເງິນ ຄ່າ ຄົນ ທີ່ຂາດ ຫາຍ ໄປພ້ອມ ຄືນໃຫ້ແກ່ຕົນ.

ຂໍ້ມູນລະອຽດກ່ຽວກັບຊັບສິ່ງຂອງທີ່ໃຫ້ສານ ☑ກວດກາ ☐ອາຍັດ. ມີຫຍັງແດ່ ? ຕັ້ງຢູ່ໃສ ?.

1) ທີ່ດິນ ຕັ້ງຢູ່ ບ້ານ ສັງຄະໂລກ ເມືອງ ຫຼວງພະບາງ ແຂວງ ຫຼວງພະບາງ

2) ສະເໜີໃຫ້ສານ ປະຊາຊົນ ນະຄອນ ຫຼວງພະບາງ ແຕ່ງຕັ້ງຄະນະກຳມະການ ລົງກວດກາ ທີ່ດິນ ຕາມໃບຕາດິນ ສະບັບ ເລກທີ C-196-198/04 ເລກທີ 123 ອອກໃຫ້ນາງ ບຸນທັນ

3) ແລະ ໃບຕາດິນ ສະບັບເລກທີ 223 ໃບທີ 23 C-196-198/04 ຕອນດິນເລກທີ 123 ເນື້ອທີ່ດິນ 15,868 ຕາແມັດ ອອກໃຫ້ ທ້າວ ເພັດຈຳພອນ ຂຸນດາລາ + ທ້າວ [illegible]

4) ຍາດເອົາໄວ [illegible] ເນື້ອທີ່ດິນ ຕົວ ລົງ ລະກຳກັນ ໃນຕອນດິນ ທີ່ສອງ ຕອນ ນັ້ນ ເຖິງບໍ່?

5)

ເອກະສານທີ່ພົວພັນກັບການຮ້ອງຂໍ ☐ ກວດກາ ☐ ອາຍັດ.

ທີ່ ຫຼວງພະບາງ ;ວັນທີ 06 / 01 / 2016

ລາຍເຊັນຜູ້ຮ້ອງຂໍ

ເພັດຈຳພອນ

ສານປະຊາຊົນ
ແຂວງຫລວງພະບາງ
ຮັບ ເລກທີ 114
ວັນທີ 27-6-2016

ສາທາລະນະລັດລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ບໍ່ແກ້ວ

ບໍລິສັດບີບີເຄ ກົດໝາຍລາວຈໍາກັດ

ເລກທີ 029 /ບຄ.ບກ

ລົງວັນທີ 24 (6) 2016

# ຄໍາຮ້ອງຂໍ

- ຮຽນ: ທ່ານປະທານສານປະຊາຊົນແຂວງຫລວງພະບາງ ທີ່ເຄົາລົບແລະນັບຖືຢ່າງສູງ;
- ເລື່ອງ: ຮ້ອງຂໍໃຫ້ທາງສານປະຊາຊົນແຂວງຫລວງພະບາງໂຈະການພິຈາລະນາຕັດສິນຄະດີແພ່ງເລກທີ່ 17 /ຂຕ.ພ ລົງວັນທີ 11 ທັນວາ 2015 ໄວ້ເປັນການຊົ່ວຄາວເພື່ອປະກອບຫລັກຖານເພີ່ມເຕີມ.
- ອີງຕາມ: ໃບແຕ່ງຕັ້ງແລະມອບສິດໃຫ້ທະນາຍຄວາມເລກທີ່ 28 /ບຄ.ບກ ລົງວັນທີ່ 22.6.2016

ຂ້າພະເຈົ້າຊື່ແລະນາມສະກຸນ ທ້າວ ບຸນທະວີ ຄໍລະຍົກ (ທະນາຍຄວາມແຫ່ງສປປລາວ) ມີໃບອະນຸຍາດວ່າຄວາມເລກທີ່ 46/ກຍ ລົງວັນທີ່ 09.05.2005 ຈາກລັດຖະມົນຕີວ່າການກະຊວງຍຸຕິທໍາ, ປະທານບໍລິສັດ ບີບີເຄ ກົດໝາຍລາວ ຈໍາກັດ ຜູ້ດຽວ, ທະບຽນວິສາຫະກິດເລກທີ່ 243/ຈທວ ລົງວັນທີ່ 05.02.2013, ມີສໍານັກງານຕັ້ງຢູ່ໜ່ວຍ 10 ບ້ານ ໃຫຍ່ຫ້ວຍຊາຍເໜືອ,ເມືອງ ຫ້ວຍຊາຍ, ແຂວງບໍ່ແກ້ວ;

-ຂໍຖືເປັນກຽດຂຽນຄຮ້ອງສະບັບນີ້ຮຽນມາຍັງທ່ານສານປະຊາຊົນແຂວງຫລວງພະບາງເພື່ອຂໍໂຈະການພິຈາລະນາຕັດສິນຄະດີແພ່ງເລກທີ່ 17 /ຂຕ.ພ ລົງວັນທີ 11 ທັນວາ 2015 ໄວ້ຊົ່ວຄາວຊົ່ວຄາວ; ໃນຄະດີລະຫວ່າງ:

- ທ້າວ ເພັດຈໍາພອນ ຊຸນດາລາ ແລະ ທ້າວ ແສງວົງຈິດ ຢາງວີໄລ.......................................................(ໂຈດ)
- ນາງ ບຸນທັນ ລັກປະສິດ......................................................................................(ຈໍາເລີຍ)
- ກ່ຽວເລື່ອງ: ທວງເອົາເງິນຄືນ (ຈາກສັນຍາຊື້-ຂາຍທີ່ດິນ) ຈໍານວນ 5,952,055 ບາດ;

ເຫດຜົນຂໍໂຈະການພິຈາລະນາຕັດສິນໄວ້ຊົ່ວຄາວ:

1. ປະຈຸບັນນີ້ທາງໂຈດ(ຜູ້ຮ້ອງຟ້ອງ) ໄດ້ມີການກວດພົບຂໍ້ມູນຫລັກຖານອັນໃໝ່ ແລະ ພວມມີການກວດສອບລາຍລະອຽດໃຫ້ຈະແຈ້ງເສຍກ່ອນ.
2. ພາຍຫລັງມີການກວດເຊັກລາຍລະອຽດຂໍ້ມູນໃໝ່ແລ້ວ ແມ່ນຈະໄດ້ສະເໜີໃຫ້ທາງສານປະຊາຊົນລົງກວດກາ ແລະ ອາຍັດຊັບ ເຊິ່ງເປັນບ່ອນອີງແລະອໍານວຍຄວາມສະດວກໃຫ້ແກ່ການໃຊ້ແທນໜີ້ສິນໃຫ້ໂຈດໃນຕໍ່ໜ້າ.

ດັ່ງນັ້ນ: ຈຶ່ງໄດ້ຂຽນໃບສະເໜີສະບັບນີ້ຮຽນມາຍັງທ່ານເພື່ອຊ່ວຍຄົ້ນຄວ້າພິຈາລະນາຕາມທາງທີ່ເຫັນວ່າສົມຄວນແລະຕາມກົດໝາຍດ້ວຍ;

ຮ້ອງຂໍຮຽນມາຍັງທ່ານດ້ວຍຄວາມເຄົາລົບແລະນັບຖືຢ່າງສູງ

ບໍລິສັດບີບີເຄກົດໝາຍລາວຈໍາກັດຜູ້ດຽວ

ທະນາຍຄວາມ

ຍຸຕິ ທໍາ ພະນະທາ ບໍລິສັດ ບີບີເຄກົດໝາຍລາວ ຈໍາກັດຜູ້ດຽວ ແຂວງ ບໍ່ ແກ້ວ

ບຸນທະວີ ຄໍລະຍົກ
**Bounthavy KHORAYOKE**